**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມຄຸ້ມຄອງວິສາຫະກິດ

0912----

ເລກທີ /ກຄວ

ນະຄອນຫຼວງວຽງຈັນ, ວັນທີ 21 ພະຈິກ 2025

# ແຈ້ງການ

**ເຖິງ:** - ພາກລັດ ແລະ ເອກະຊົນ, ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງ;

- ເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ;

**ເລື່ອງ:** ການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ສະບັບເລກທີ 2025/ອຄ, ລົງວັນທີ 09 ກັນຍາ 2025.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 2003/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ສະບັບເລກທີ 2025/ອຄ, ລົງວັນທີ 09 ກັນຍາ 2025.

ກົມຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດ ແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ຂໍ້ຕົກລົງວ່າດ້ວຍການປະກອບທຶນຈົດທະບຽນວິສາຫະກິດ ສະບັບເລກທີ 2025/ອຄ, ລົງວັນທີ 09 ກັນຍາ 2025 ແມ່ນລົງໃນຈົດໝາຍເຫດທາງລັດຖະການ, ກະຊວງຍຸຕິທຳ ນັບແຕ່ວັນທີ 17 ກັນຍາ 2025 ຊຶ່ງປັດຈຸບັນແມ່ນຄົບກຳນົດເວລາ ສີ່ສິບຫ້າວັນ ຕາມລະບຽບການແລ້ວ. ສະນັ້ນ, ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ນັບແຕ່ວັນທີ 23 ຕຸລາ 2025 ເປັນຕົ້ນໄປ.
2. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເຜີຍແຜ່ນິຕິກຳສະບັບດັ່ງກ່າວ ໃຫ້ພາກທຸລະກິດ ແລະ ຂະແໜງການທີ່ກ່ຽວຂ້ອງຂອງຕົນ, ພ້ອມທັງ ແນະນຳໃຫ້ເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ, ຜູ້ໄດ້ຮັບມອບສິດ ເວລາມາຮັບເອົາໃບທະບຽນວິສາຫະກິດໃຫ້ຮັບຊາບ ແລະ ເຂົ້າໃຈລະອຽດ ກ່ຽວກັບເນື້ອໃນຂໍ້ຕົກລົງສະບັບດັ່ງກ່າວ.
3. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເກັບກຳສະຖິຕິຫົວໜ່ວຍວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງລະອຽດ ເພື່ອຕິດຕາມການປະກອບທຶນຈົດທະບຽນວິສາຫະກິດໃຫ້ໄດ້ທັນຕາມເວລາທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບດັ່ງກ່າວນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

**ອະພິສິດ ແສງສຸລີວົງ**

Scanned with CamScanner